ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ວຽກງານການຊໍາລະ ທີ່ຕິດພັນກັບການຄຸ້ມຄອງ ຕິດຕາມກວດກາລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະ




ກົມຄຸ້ມຄອງລະບົບຊໍາລະສະສາງໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ວຽກງານການຊໍາລະ ທີ່ຕິດພັນກັບການຄຸ້ມຄອງຕິດຕາມກວດກາລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະຢ່າງເປັນທາງການໃນວັນທີ 21 ມັງກອນ 2021 ທີ່ຫ້ອງປະຊຸມຊັ້ນ VI ສໍານັກງານຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ (ສຄຄຊ), ນະຄອນຫລວງວຽງຈັນ. ໂດຍການເປັນປະທານຂອງທ່ານ ນາງ ລໍາມອນ ສີມມະໄລວົງ ຮອງຫົວໜ້າກົມຄຸ້ມຄອງລະບົບຊໍາລະສະສາງ, ພ້ອມນີ້ ກໍມີບັນດາຜູ້ຕາງໜ້າຈາກບັນດາພາກສ່ວນກ່ຽວຂ້ອງເປັນຕົ້ນ ກະຊວງອຸດສາຫະກໍາແລະການຄ້າ; ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ; ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ; ສະມາຄົມທະນາຄານທຸລະກິດ; ສະມາຄົມການເງິນຈຸລະພາກ; ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ; ສະມາຄົມໄອຊີທີລາວ; ບັນດາສະຖາບັນການເງິນ ແລະ ບັນດາບໍລິສັດ; ບັນດາຄະນະພະແນກ ແລະ ວິຊາການ ຈາກກົມທີ່ກ່ຽວຂ້ອງເຂົ້າຮ່ວມ.

ການເຜີຍແຜ່ວຽກງານການຊໍາລະ ໃນຄັ້ງນີ້ແມ່ນເປັນການເຜີຍແຜ່ບັນດານິຕິກໍາທີ່ຕິດພັນກັບການຄົ້ນຄວ້າອະນຸຍາດ, ການຕິດຕາມກວດກາລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະເພື່ອຊຸກຍູ້ໃຫ້ວຽກງານການຊໍາລະ ມີການເຄື່ອນໄຫວຢ່າງມີປະສິດທິພາບ ແລະ ມີຄວາມປອດໄພ ແນໃສ່ສົ່ງເສີມການຂັບເຄື່ອນທາງດ້ານເສດຖະກິດ ແລະ ຮັກສາສະຖຽນລະພາບທາງການເງິນ-ເງິນຕາແຫ່ງຊາດ ແລະ ເພື່ອຮັບປະກັນການຈັດຕັ້ງປະຕິບັດມີຄວາມເປັນເອກະພາບ ແລະ ສອດຄ່ອງຕາມລະບຽບການທີ່ ທຫລ ວາງອອກແຕ່ລະໄລຍະ. ທັງເຮັດໃຫ້ຜູ້ເຂົ້າຮ່ວມ ຮັບຮູ້-ເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບເນື້ອໃນຈິດໃຈຂອງບັນດາລະບຽບການທີ່ ທຫລ ວາງອອກ ເພື່ອນໍາໄປຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບທຸລະກິດຂອງຕົນ ຢ່າງຖືກຕ້ອງ. ສໍາລັບຜູ້ໃຫ້ບໍລິການຊໍາລະ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ມີການເຄື່ອນໄຫວທີ່ບໍ່ສອດຄ່ອງ ຫຼື ລະເມີດລະບຽບກົດໝາຍ ກໍ່ມີການຈັດຕັ້ງປະຕິບັດມາດຕະການສະເພາະ.



ດັ່ງທີ່ພວກເຮົາຮັບຮູ້ນຳກັນແລ້ວວ່າປັດຈຸບັນໃນສັງຄົມລາວພວກເຮົາໄດ້ມີການໃຫ້ບໍລິການຊຳລະທີ່ມີຄວາມຫຼາກຫຼາຍ, ການດຳເນີນທຸລະກິດຂອງຫຼາຍພາກສ່ວນ ຫຼື ຫົວໜ່ວຍທຸລະກິດ ແມ່ນມີການນຳໃຊ້ເຄື່ອງມືການຊຳລະທີ່ແຕກຕ່າງກັນ ບໍ່ວ່າຈະເປັນການຊຳລະດ້ວຍເງິນສົດ, ບັດ, ແຊັກ, ເງິນໂອນ, ເງິນອີເລັກໂຕຼນິກ ເຊິ່ງການນຳໃຊ້ເຄື່ອງມືທັງໝົດນັ້ນ ຮຽກຮ້ອງໃຫ້ມີການຄຸ້ມຄອງທີ່ຮັດກຸມ ແນໃສ່ເຮັດໃຫ້ການພັດທະນາລະບົບການຊຳລະມີຄວາມສະດວກ, ປອດໄພ, ສາມາດເຊື່ອມໃຊ້ຮ່ວມກັນໄດ້ ມີຄວາມໜ້າເຊື່ອຖືແລະມີຕົ້ນທຶນຕໍ່າ. ຍ້ອນເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການຊຳລະ, ລັດຖະບານຈຶ່ງໄດ້ປະກາດນຳໃຊ້ກົດໝາຍວ່າດ້ວຍລະບົບການຊຳລະສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017ແລະ ໄດ້ມອບໃຫ້ ທຫລ ເປັນຜູ້ຄຸ້ມຄອງມະຫາພາກດ້ານວຽກງານການຊຳລະຢ່າງລວມສູນໃນຂອບເຂດທົ່ວປະເທດ ເຊິ່ງມີກົມຄຸ້ມຄອງລະບົບຊຳລະສະສາງ ທີ່ເປັນເສນາທິການໃຫ້ແກ່ ທຫລ ກໍຄືລັດຖະບານໃນການຈັດຕັ້ງປະຕິບັດການຄຸ້ມຄອງຕິດຕາມກວດກາວຽກງານດັ່ງກ່າວໃຫ້ມີການເຄື່ອນໄຫວທີ່ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ. ສະນັ້ນ, ຜູ້ທີ່ມີຈຸດປະສົງໃຫ້ບໍລິການຊຳລະ ຕ້ອງໄດ້ຜ່ານການອະນຸຍາດຈາກ ທຫລ.

ໃນໄລຍະຜ່ານມາ ກົມຄຸ້ມຄອງລະບົບຊຳລະສະສາງ ກໍ່ຄື ທະນາຄານແຫ່ງ ສປປ ລາວ ໄດ້ມີການຄຸ້ມຄອງ ແລະ ຕິດຕາມກວດກາຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການຊຳລະ ໂດຍການຄົ້ນຄ້ວາພິຈາລະນາອະນຸຍາດຜູ້ໃຫ້ບໍລິການຊຳລະ, ດຳເນີນການຕິດຕາມກວດກາແລະຍຸບເລີກການໃຫ້ບໍລິການຊຳລະຕາມລະບຽບການຢ່າງເປັນປົກກະຕິ.ເຖິງແນວໃດກໍຕາມຍັງມີບາງພາກສ່ວນຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຫັນໄດ້ວ່າຍັງມີນິຕິບຸກຄົນບາງແຫ່ງມີການເຄື່ອນໄຫວໂດຍທີ່ຍັງບໍ່ໄດ້ເຂົ້າມາພົວພັນເພື່ອຂໍອະນຸຍາດຈາກ ທຫລ ເປັນຕົ້ນແມ່ນການໃຫ້ບໍລິການຕູ້ເຕີມເງິນເອເລັກໂຕຣນິກ, ການອອກເງິນເອເລັກໂຕຼນິກ ແລະ ການສ້າງ Platform ການໃຫ້ບໍລິການອອນລາຍ ແລະ ອື່ນໆ ທີ່ມີການຊຳລະກ່ຽວຂ້ອງກັບກົນໄກການໃຫ້ບໍລິການ Platform ດັ່ງກ່າວແມ່ນຍັງປະກົດເຫັນໃນສັງຄົມ.

ທ່ານປະທານກອງປະຊຸມໄດ້ເນັ້ນໜັກຕື່ມໃນຂອດການຄຸ້ມຄອງຕິດຕາມກວດກາໃນການຄົ້ນຄວ້າອອກອະນຸຍາດການຕິດຕາມກວດກາ ພ້ອມທັງໄດ້ຮຽກຮ້ອງໃຫ້ບັນດາຜູ້ທີ່ມີສ່ວນຮ່ວມທັງພາກລັດ, ພາກທຸລະກິດ ແລະ ຜູ້ໃຊ້ບໍລິການຕ້ອງມີກົນໄກໃນການປະສານງານກັນຢ່າງກົມກຽວ ເພື່ອເຮັດໃຫ້ການຄຸ້ມຄອງວຽກງານຊຳລະມີຄວາມຄ່ອງຕົວດີຍິ່ງຂຶ້ນ.

ຖ້າຫາກວ່າພາກສ່ວນໃດຫາກມີຄວາມສົນໃຈເພີ່ມຕື່ມກ່ຽວກັບການສະເໜີຂໍອະນຸຍາດປັບປຸງ, ປ່ຽນແປງການເປັນຜູ້ຄວບຄຸມລະບົບຍ່ອຍ, ການເປັນຜູ້ໃຫ້ບໍລິການຊຳລະ, ການພັດທະນາ ແລະ ການອອກຜະລິດຕະພັນການໃຫ້ບໍລິການຊຳລະ ① ແມ່ນສາມາດຕິດຕາມຂໍ້ມູນທາງ Website: www.bol.gov.la ຫຼື ②ສາມາດປະສານງານຜ່ານຊ່ອງທາງໂທລະສັບ: ເບີໂທຕິດຕໍ່ 021 253 596, 021 253 595; 021 253 597 ຫຼື ③ສາມາດເຂົ້າມາປຶກສາເພີ່ມຕື່ມໄດ້ ທີ່ກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ, ເຊິ່ງພວກເຮົາມີຄວາມຍິນດີແລະ ພ້ອມທີ່ຈະໃຫ້ຄຳປຶກສາໃຫ້ຂໍ້ມູນແກ່ບັນດາທ່ານຕໍ່ກັບວຽກງານກ່ຽວຂ້ອງ.

**# ຂ່າວໂດຍ: ກົມຄຸ້ມຄອງລະບົບຊຳລະສະສາງ, ທຫລ.**

**# ພາບ: ນ. ວັນປະເສີດ ສີມບູນຂັນ.**